ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

# ສະຖິຕິການນຳເຂົ້າ-ສົ່ງອອກ ພາຍໃຕ້ສິດທິພິເສດທາງການ ຄ້າຂອງ ສປປ ລາວ ແຕ່ປີ 2013-2017

ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ
ເດືອນ ສິງຫາ 2018

# ຄຳເຫັນຂອງ ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ເພື່ອປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 05 ປີ ຄັ້ງທີ VIII (2016-2020) ທີ່ສຸມໃສ່ພັດທະນາຂະແໜງອຸດສາຫະກຳປຸງແຕ່ງ, ການຄ້າ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຕີບໃຫຍ່ຂະຫຍາຍຕົວບໍ່ວ່າຈະເປັນທາງດ້ານປະລິມານກໍຄືຄຸນນະພາບ. ພ້ອມທັງສູ້ຊົນໃຫ້ມູນຄ່າການສົ່ງອອກສິນຄ້າຂະຫຍາຍຕົວສະເລ່ຍ 15% ຕໍ່ປີ ແລະ ເຮັດໃຫ້ການຂາດດຸນການຄ້າກັບຕ່າງປະເທດໃນແຕ່ລະປີຢູ່ໃນລະດັບທີ່ສາມາດຊຳລະສະສາງໄດ້. ເພື່ອບັນລຸຄາດໝາຍສູ້ຊົນດັ່ງກ່າວ ສ່ວນແບ່ງຕະຫຼາດສົ່ງອອກໃນອາຊຽນຕ້ອງໃຫ້ໄດ້ 70% ຂຶ້ນໄປ ແລະ ຕະຫຼາດອາຊຽນກັບຄູ່ເຈລະຈາອື່ນໆ ໃຫ້ໄດ້ຫລາຍກວ່າ 90%. ທັງໝົດນັ້ນເຊື່ອແນ່ວ່າຈະຊ່ວຍປະກອບສ່ວນເຂົ້າໃນການຮັກສາອັດຕາການເຕີບໂຕທາງເສດຖະກິດໃຫ້ໄດ້ 7.9% ຕໍ່ປີ ພ້ອມທັງ ຫຼຸດຜ່ອນຄວາມທຸກຍາກຕາມແນວທາງທີ່ພັກ ແລະ ລັດວາງອອກ.

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ມີນະໂຍບາຍເປີດກວ້າງການຮ່ວມມືດ້ານເສດຖະກິດ-ການຄ້າກັບບັນດາປະເທດໃນພາກພື້ນ ແລະ ສາກົນ. ສະນັ້ນ, ສປປ ລາວຈຶ່ງໄດ້ເຂົ້າຮ່ວມການເຈລະຈາການຄ້າເສລີໃນຂອບອາຊຽນ, ແລະ ອາຊຽນກັບຄູ່ເຈລະຈາ ຄື: ອາຊຽນ-ຈີນ, ອາຊຽນ-ຍີ່ປຸ່ນ, ອາຊຽນ-ສ.ເກົາຫຼີ, ອາຊຽນ-ອິນເດຍ, ແລະ ອາຊຽນ-ອົດສະຕາລີ-ນິວຊີແລນ. ຜົນທີ່ໄດ້ກໍຄື ສປປ ລາວ ມີໂອກາດເຂົ້າສູ່ຕະຫຼາດຂອງບັນດາປະເທດເຫຼົ່ານັ້ນ ໃນອັດຕາພາສີພິເສດ ພາຍໃຕ້ເງື່ອນໄຂແຫຼ່ງກຳເນີດສິນຄ້າສະເພາະ. ນອກຈາກສິດທິພິເສດທາງການຄ້າໃນຂອບການຄ້າເສລີ, ສປປ ລາວ ຍັງໄດ້ຮັບສິດທິພິເສດແບບຝ່າຍດຽວຈາກບັນດາປະເທດທີ່ກຳລັງພັດທະນາ ແລະ ພັດທະນາແລ້ວ ຄື: ສະຫະພາບເອີຣົບ, ຍີ່ປຸ່ນ, ນໍ່ກແວ, ສະວິດ, ສປ ຈີນ, ອິນເດຍ, ສ.ເກົາຫຼີ, ອົດສະຕາລີ, ການາດາ, ໄຕ້ຫວັນ, ຕວກກີ, ນິວຊີແລນ, ຣັດເຊຍ, ເບລາລູດ, ແລະ ຄາຊັກສະຖານ. ການເປັນພາຄີໃນຂອບສັນຍາຕ່າງໆ ແລະ ການໄດ້ຮັບສິດທິພິເສດແບບຝ່າຍດຽວສາມາດຊ່ວຍດຶງດູດການລົງທຶນຂອງຕ່າງປະເທດເຂົ້າມາໃນ ສປປ ລາວ ເຮັດການຜະລິດເພື່ອສົ່ງອອກ, ພ້ອມດຽວກັນນັ້ນ ກໍ່ຍັງເປີດໂອກາດໃຫ້ແກ່ຜູ້ປະກອບການຢູ່ ສປປ ລາວ ສາມາດເຂົ້າເຖິງຕະຫຼາດຂອງບັນດາປະເທດທີ່ກ່າວມານັ້ນ ອີກດ້ວຍ.

ໃນໄລຍະ 05 ປີຜ່ານມາ ແຕ່ປີ 2013 ຫາ 2017 ສປປ ລາວ ເຫັນໄດ້ວ່າການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໂດຍສະເລ່ຍກວມເອົາ 30% ຂອງການສົ່ງອອກທັງໝົດ ຊຶ່ງຫຼາຍກວ່າການນຳເຂົ້າເກືອບສາມເທົ່າ. ນັ້ນກໍສະແດງໃຫ້ເຫັນວ່າ ສິດທິພິເສດທາງດ້ານການຄ້າໄດ້ປະກອບສ່ວນເຂົ້າໃນການຂະຫຍາຍຕົວຂອງການສົ່ງອອກໃນລະດັບໜຶ່ງ. ເພື່ອໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ສາມາດຮັບຮູ້ ຂໍ້ມູນຂ່າວສານ ກ່ຽວກັບ ການນຳໃຊ້ສິດທິພິເສດທາງດ້ານການຄ້າຂອງ ສປປ ລາວ ແລະ ໝູນໃຊ້ຂໍ້ມູນດັ່ງກ່າວໃຫ້ເກີດປະໂຫຍດ, ກົມການນຳເຂົ້າ ແລະ ສົ່ງອອກ ຈຶ່ງໄດ້ມີຄວາມພະຍາຍາມສ້າງປຶ້ມສະຖິຕິການນຳເຂົ້າ ແລະ ສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າສະບັບທຳອິດນີ້ຂຶ້ນ ຊຶ່ງໄດ້ສັງລວມສະຖິຕິການສົ່ງອອກໃນໄລຍະແຕ່ປີ 2013 ຫາ 2017, ສ່ວນສະຖິຕິການນຳເຂົ້າແມ່ນສາມາດສັງລວມໄດ້ໃນໄລຍະແຕ່ປີ 2013 ຫາ 2015. ການສັງລວມຂໍ້ມູນຈະບໍ່ສາມາດປະກົດຜົນເປັນຈິງໄດ້ຖ້າປາດສະຈາກການໃຫ້ຄວາມຮ່ວມມືຂອງ ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ແຂວງໃນຂອບເຂດທົ່ວປະເທດ, ເຂດເສດຖະກິດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ, ເຂດເສດຖະກິດພິເສດສະຫວັນ-ເຊໂນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ແຂວງໃນຂອບເຂດທົ່ວປະເທດ, ແລະ ກົມພາສີ, ກະຊວງການເງິນ. ສະນັ້ນ, ຈຶ່ງຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈ ມານະໂອກາດນີ້ດ້ວຍ.

ກົມການນຳເຂົ້າ ແລະ ສົ່ງອອກ ຫວັງເປັນຢ່າງຍິ່ງວ່າປຶ້ມຫົວນີ້ຈະນຳປະໂຫຍດມາສູ່ບັນດາ ທ່ານ ບໍ່ຫຼາຍກໍ່ໜ້ອຍ. ຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ພວກເຮົາຂໍອະໄພມາຍັງນະທີ່ນີ້ດ້ວຍ ແລະ ມີຄວາມຍິນດີຮັບເອົາຄຳຕຳນິຕິຊົມຂອງບັນດາ ທ່ານ ເພື່ອນຳໄປປັບປຸງໃນການສ້າງປຶ້ມສະຖິຕິສະບັບຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2018

ຫົວໜ້າກົມ,

ສຸລິຍົນ ພິລາວົງ

# ບັນຊີລາຍຊື່ຂອງຕົວອັກສອນຫຍໍ້

Form AT: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນເຄື່ອງນຸ່ງຫົ່ມໄປສະຫະພາບເອີຣົບ

Form A: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນທົ່ວໄປ

Form D: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ATIGA)

Form E: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ - ສປ ຈີນ (ACFTA)

Form S: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ - ຫວຽດນາມ

Form SPT: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ

Form AI: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (AIFTA)

Form AK: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ (AKFTA)

Form AJ: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (AJCEP)

Form AANZ: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (AANZFTA)

Form DFTP: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (DFTP)

Form APTA: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າອາຊີ-ປາຊີຟິກ (APTA)

Form CO-Korea: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (CO-Korea)

## ສາລະບານ

ໜ້າ


| | |
|---|---|
| 1. ພາບລວມການນໍາເຂົ້າ-ສົ່ງອອກສິນຄ້າ ແຕ່ປີ 2013 ຫາ 2017 | 1 |
| 2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 2 |
| 2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 2 |
| 2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 4 |
| 2.3 ປະເພດແບບຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (ຟອມ CO) | 5 |
| 2.3.1 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ (ຟອມ AT) | 6 |
| 2.3.2 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນທົ່ວໄປ (ຟອມ A) | 8 |
| 2.3.3 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ຟອມ D) | 10 |
| 2.3.4 ສັນຍາການຄ້າເສລີ ອາຊຽນ - ສປ ຈີນ (ຟອມ E) | 11 |
| 2.3.5 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກໍາເນີດສິນຄ້ານໍາໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນໍາເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (ຟອມ S) | 12 |
| 2.3.6 ສິດທິພິເສດການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (ຟອມ SPT) | 13 |
| 2.3.7 ສັນຍາການຄ້າເສລີ ອາຊຽນ - ອິນເດຍ (ຟອມ AI) | 13 |
| 2.3.8 ສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ (ຟອມ AK) | 15 |
| 2.3.9 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ອາຊຽນ-ຍີ່ປຸ່ນ (ຟອມ AJ) | 16 |
| 2.3.10 ສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (ຟອມ AANZ) | 17 |
| 2.3.11 ສັນຍາການຄ້າ ອາຊີ-ປາຊີຟິກ (ຟອມ APTA) | 19 |
| 2.3.12 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (ຟອມ CO-Korea) | 19 |
| 3. ການນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 20 |
| 3.1 ປະເທດນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 20 |
| 3.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 23 |
| 4. ເອກະສານຄັດຕິດ ແລະ ເອກະສານຊ້ອນທ້າຍ | 25 |
| - ເອກະສານຄັດຕິດທີ 01 ສະຖິຕິການນໍາເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ປີ 2013 ເຖິງ 2017 | 26 |
| - ເອກະສານຄັດຕິດທີ 02 ປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2015, 2016, ແລະ 2017 | 26 |
| - ເອກະສານຄັດຕິດທີ 03 ສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ | 28 |
| - ເອກະສານຄັດຕິດທີ 04 ປະເທດສົ່ງອອກພາຍໃຕ້ທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ | 29 |
| - ເອກະສານຄັດຕິດທີ 05 ສິນຄ້າສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) | 29 |
| - ເອກະສານຄັດຕິດທີ 06 ປະເທດສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) | 30 |
| - ເອກະສານຄັດຕິດທີ 07 ສິນຄ້າສົ່ງອອກໂດຍນໍາໃຊ້ແບບຟອມ D | 30 |
| - ເອກະສານຄັດຕິດທີ 08 ປະເທດສົ່ງອອກສິນຄ້າໂດຍນໍາໃຊ້ແບບຟອມ D | 31 |
| - ເອກະສານຄັດຕິດທີ 09 ສິນຄ້າສົ່ງອອກໂດຍນໍາໃຊ້ແບບຟອມ E | 31 |

- ເອກະສານຄັດຕິດທີ 10 ສິນຄ້າການສົ່ງອອກໂດຍນຳໃຊ້ແບບຟອມ S 32
- ເອກະສານຄັດຕິດທີ 11 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AI 32
- ເອກະສານຄັດຕິດທີ 12 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AI 33
- ເອກະສານຄັດຕິດທີ 13 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AK 33
- ເອກະສານຄັດຕິດທີ 14 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AK 34
- ເອກະສານຄັດຕິດທີ 15 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AJ 34
- ເອກະສານຄັດຕິດທີ 16 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AJ 35
- ເອກະສານຄັດຕິດທີ 17 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AANZ 35
- ເອກະສານຄັດຕິດທີ 18 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AANZ 36
- ເອກະສານຄັດຕິດທີ 19 ສິນຄ້າທີ່ມີການສົ່ງອອກໂດຍນຳໃຊ້ແບບຟອມ CO-Korea 36
- ເອກະສານຄັດຕິດທີ 20 ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ 2013-2017 37
- ເອກະສານຊ້ອນທ້າຍທີ 01 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນເຄື່ອງນຸ່ງຫົ່ມໄປສະຫະພາບເອີຣົບ 39
- ເອກະສານຊ້ອນທ້າຍທີ 02 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນທົ່ວໄປ 48
- ເອກະສານຊ້ອນທ້າຍທີ 03 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ATIGA) 55
- ເອກະສານຊ້ອນທ້າຍທີ 04 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ- ສປ ຈີນ (ACFTA) 62
- ເອກະສານຊ້ອນທ້າຍທີ 05 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ-ສົ່ງອອກ ສປປ ລາວ - ຫວຽດນາມ 64
- ເອກະສານຊ້ອນທ້າຍທີ 06 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ 67
- ເອກະສານຊ້ອນທ້າຍທີ 07 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ- ອິນເດຍ (AIFTA) 68
- ເອກະສານຊ້ອນທ້າຍທີ 08 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ- ສ.ເກົາຫຼີ (AKFTA) 70
- ເອກະສານຊ້ອນທ້າຍທີ 09 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (AJCEP) 71
- ເອກະສານຊ້ອນທ້າຍທີ 10 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ- ອົດສະຕາລີ - ນິວຊີແລນ (AANZFTA) 73
- ເອກະສານຊ້ອນທ້າຍທີ 11 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າ ອາຊີ-ປາຊີຟິກ (APTA) 74
- ເອກະສານຊ້ອນທ້າຍທີ 12 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (CO-Korea) 75
- ເອກະສານຊ້ອນທ້າຍທີ 13 ຕາຕະລາງລາຍການສິນຄ້າທີ່ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ 76
- ເອກະສານຊ້ອນທ້າຍທີ 14 ຕາຕະລາງລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ 95

## 1. ພາບລວມການນຳເຂົ້າ-ສົ່ງອອກສິນຄ້າ ແຕ່ປີ 2013 ຫາ 2017.

ນັບຕັ້ງແຕ່ປີ 2013 ເປັນຕົ້ນມາມູນຄ່າການຄ້າໃນແຕ່ລະປີແມ່ນ ມີລັກສະນະຂຶ້ນລົງຕາມສະພາບເສດຖະກິດ. ແຕ່ປີ 2013 ຫາ ປີ 2015 ສປປ ລາວ ແມ່ນຂາດດຸນການຄ້າ, ຈົນມາເຖິງປີ 2016 ແລະ 2017 ສປປ ລາວ ສາມາດບັນລຸການເກີນດຸນ, ຊຶ່ງມູນຄ່າການເກີນດຸນແມ່ນ 16,922,476.00 ໂດລາສະຫະລັດ, ແລະ 95,491,498.00 ໂດລາສະຫະລັດ ຕາມລຳດັບ.

ນອກຈາກຈະມີການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ສປປ ລາວ ຍັງມີການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ທັງແບບຝ່າຍດຽວ[1] ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ[2]. ໃນລະຫວ່າງປີ 2013 - 2017 ເຫັນວ່າ ມູນຄ່າການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າມີການປັບຂຶ້ນລົງຕາມສະພາບການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ. ທ່າອ່ຽງໃນການນຳໃຊ້ສິດທິພິເສດທາງການຄ້າ ຫຼື ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແມ່ນມີແນວໂນ້ມເພີ່ມຂຶ້ນ.

ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນແຕ່ປີ 2013 ຫາ 2017 ກວມເອົາອັດຕາສ່ວນຂອງການສົ່ງອອກທັງໝົດຄື: 27.2%, 34.9%, 31.8%, 26.7%, ແລະ 28.5% ຕາມລຳດັບ. ສຳລັບການນຳເຂົ້າໃນປີ 2013, 2014, ແລະ 2015 ເຫັນວ່າ ກວມເອົາພຽງແຕ່ 5.7%, 3.2%, ແລະ 4.3% ຕາມລຳດັບ ຂອງມູນຄ່າການນຳເຂົ້າທັງໝົດ. ພໍມາຮອດປີ 2016 ແລະ 2017 ມູນຄ່າການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າເພີ່ມຂຶ້ນຫຼາຍພໍສົມຄວນ ເມື່ອທຽບໃສ່ມູນຄ່າການນຳເຂົ້າທັງໝົດກວມເອົາ 14.1%, ແລະ 11.2% ຕາມລຳດັບ. (ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 01)

**ຮູບສະແດງ 01**: ການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ປີ 2013 ເຖິງ 2017




[1] ສິດທິພິເສດແບບຝ່າຍດຽວ (ລະບົບສິດທິພິເສດທົ່ວໄປ: GSP)

[2] ສິດທິພິເສດແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ (ສັນຍາການຄ້າເສລີ: FTA)

## 2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

### 2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2017 ສປປ ລາວ ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄປ 37 ປະເທດ. ໃນນັ້ນ, ປະເທດທີ່ສົ່ງອອກໄປຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ ແລະ ຍີ່ປຸ່ນ; ມີມູນຄ່າການສົ່ງອອກສູງເຖິງ 567,908,788.45 ໂດລາສະຫະລັດ, 270,548,296.38 ໂດລາສະຫະລັດ ແລະ 108,207,307.52 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການສົ່ງອອກໄປໜ້ອຍທີ່ສຸດແມ່ນ ນິວຊີແລນ, ເດນມາກ, ແລະ ສະວີດ; ຊຶ່ງມີມູນຄ່າ 35,352.30 ໂດລາສະຫະລັດ, 39,767.50 ໂດລາສະຫະລັດ, ແລະ 44,742.94 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2016 ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄປ 40 ປະເທດ. ໃນນັ້ນ, ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າຫຼາຍກວ່າໝູ່ແມ່ນໄປ ໄທ, ສສ ຫວຽດນາມ, ແລະ ເຢຍລະມັນ; ມູນຄ່າການສົ່ງອອກສຳລັບປີ 2016 ແມ່ນ 518,367,833.70 ໂດລາສະຫະລັດ, 184,024,878.21 ໂດລາສະຫະລັດ, ແລະ 63,601,063.84 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການສົ່ງອອກໄປໜ້ອຍກວ່າໝູ່ໃນປີນີ້ແມ່ນ ສ.ມຽນມາ, ເກົາຫຼີ, ແລະ ສະໂລເວເນຍ; ມູນຄ່າການສົ່ງອອກແມ່ນ 9,600.00 ໂດລາສະຫະລັດ, 44.160.00 ໂດລາສະຫະລັດ, ແລະ 57,754.60 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2015 ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄປ 34 ປະເທດ. ໃນນັ້ນ, ປະເທດທີ່ສົ່ງອອກໄປຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ, ແລະ ເຢຍລະມັນ; ມູນຄ່າການສົ່ງອອກສຳລັບປີ 2015 ແມ່ນ 464,481,841.56 ໂດລາສະຫະລັດ, 204,296,479.38 ໂດລາສະຫະລັດ, ແລະ 94,136,989.23 ໂດລາສະຫະລັດ ຕາມລຳດັບ. ສຳລັບປະເທດທີ່ມີການສົ່ງອອກໜ້ອຍກວ່າໝູ່ໃນປີນີ້ແມ່ນ ສິງກະໂປ, ການາດາ, ແລະ ສະວິດເຊີແລນ; ຊຶ່ງມີມູນຄ່າ 9,456.00 ໂດລາສະຫະລັດ, 21,669.59 ໂດລາສະຫະລັດ, ແລະ 34,546.27 ໂດລາສະຫະລັດ ຕາມລຳດັບ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 02)

**ຮູບສະແດງ 02:** *ປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ* 2015, 2016, ແລະ 2017



## 2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2017 ການສົ່ງອອກສິນຄ້າຈາກ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າປະກອບມີລາຍການສິນຄ້າ 11 ກຸ່ມຄື: ສັດ, ຜະລິດຕະພັນແຮ່ທາດ, ພືດກະສິກຳ, ຫັດຖະກຳ, ອຸດສາຫະກຳ, ເຄື່ອງປ່າຂອງດົງ, ແກ້ວປະເສີດອື່ນໆ, ແຮ່ທາດ, ໂລຫະ ແລະ ເສດຕ່າງໆ, ໄຟຟ້າ, ແລະ ໄມ້ ແລະ ຜະລິດຕະພັນໄມ້. ໃນນັ້ນ, ກຸ່ມສິນຄ້າທີ່ສົ່ງອອກຫຼາຍກວ່າໝູ່ສາມອັນດັບຕົ້ນແມ່ນ ກຸ່ມອຸດສາຫະກຳ ມີມູນຄ່າການສົ່ງອອກຫຼາຍທີ່ສຸດສູງເຖິງ 660,657,638.59 ໂດລາສະຫະລັດ, ຮອງລົງມາແມ່ນ ສິນຄ້າໃນກຸ່ມພືດກະສິກຳມູນຄ່າ 485,007,493.88 ໂດລາສະຫະລັດ, ແລະ ຜະລິດຕະພັນແຮ່ທາດ ມູນຄ່າ 154,251,893.95 ໂດລາສະຫະລັດ. ສຳລັບປີ 2016 ເຫັນວ່າ ກຸ່ມສິນຄ້າທີ່ສົ່ງອອກຫຼາຍກວ່າໝູ່ແມ່ນ ສິນຄ້າໃນກຸ່ມອຸດສາຫະກຳ ມູນຄ່າ 445,902,550.336 ໂດລາສະຫະລັດ, ຮອງລົງມາແມ່ນ ພືດກະສິກຳ ມູນຄ່າ 306,270,043.134 ໂດລາສະຫະລັດ, ແລະ ຜະລິດຕະພັນແຮ່ທາດ ມູນຄ່າ 252,270,536.62 ໂດລາສະຫະລັດ. ໃນປີ 2015 ກຸ່ມສິນຄ້າທີ່ສົ່ງອອກຫຼາຍກວ່າໝູ່ແມ່ນ ອຸດສາຫະກຳ, ພືດກະສິກຳ, ແລະ ຜະລິດຕະພັນແຮ່ທາດ. ຊຶ່ງມີມູນຄ່າການສົ່ງອອກ 407,365,236.50 ໂດລາສະຫະລັດ, 363,110,994.74 ໂດລາສະຫະລັດ, ແລະ 261,348,584.01 ໂດລາສະຫະລັດ ຕາມລຳດັບ.

ສິນຄ້າໃນກຸ່ມ ສັດ ໃນປີ 2015 ເຫັນວ່າ ມີມູນຄ່າການສົ່ງອອກໜ້ອຍກວ່າໝູ່ 536,717.00 ໂດລາສະຫະລັດ, ພໍມາເຖິງປີ 2016 ເຫັນວ່າ ມູນຄ່າການສົ່ງອອກເພີ່ມຂຶ້ນຫຼາຍເຖິງ 16,045,915.80 ໂດລາສະຫະລັດ, ແລະ ໃນປີ 2017 ມູນຄ່າການສົ່ງອອກຫຼຸດລົງເມື່ອທຽບໃສ່ປີ 2016 ແມ່ນມີພຽງ 8,505,055.00 ໂດລາສະຫະລັດ. ສຳລັບສິນຄ້າໃນກຸ່ມ ຜະລິດຕະພັນແຮ່ທາດ ເຫັນວ່າ ເປັນກຸ່ມສິນຄ້າທີ່ມີມູນຄ່າການສົ່ງອອກຫຼາຍເປັນອັນດັບທີ່ສາມໃນແຕ່ລະປີ, ຊຶ່ງວ່າມູນຄ່າການສົ່ງອອກຂອງສິນຄ້າໃນກຸ່ມນີ້ແມ່ນມີທ່າອ່ຽງຫຼຸດລົງໃນແຕ່ລະປີ ຄື: ປີ 2015 ຫາ 2017 ມີມູນຄ່າການສົ່ງອອກ 261,348,584.01 ໂດລາສະຫະລັດ, 252,270,536.62 ໂດລາສະຫະລັດ, ແລະ 154,251,893.94 ໂດລາສະຫະລັດ ຕາມລຳດັບ. ສຳລັບສິນຄ້າໃນກຸ່ມ ພືດກະສິກຳ ເຫັນວ່າ ເປັນກຸ່ມສິນຄ້າທີ່ມີມູນຄ່າການສົ່ງອອກຫຼາຍເປັນອັນດັບທີ່ສອງໃນແຕ່ລະປີ, ຊຶ່ງວ່າມູນຄ່າການສົ່ງອອກຂອງສິນຄ້າໃນກຸ່ມນີ້ແມ່ນ ມີການປັບຂຶ້ນລົງໃນແຕ່ລະໄລຍະຄື: ປີ 2015 ຫາ 2017 ມີມູນຄ່າການສົ່ງອອກ 363,110,994.74 ໂດລາສະຫະລັດ, 306,270,043.13 ໂດລາສະຫະລັດ, ແລະ 485,007,493.87 ໂດລາສະຫະລັດ ຕາມລຳດັບ. ສິນຄ້າໃນກຸ່ມ ຫັດຖະກຳ ເຫັນວ່າ ມູນຄ່າການສົ່ງອອກໂດຍລວມ ແມ່ນມີການປັບຂຶ້ນລົງໃນແຕ່ລະໄລຍະຄື: 2015, 2016, ແລະ 2017 ມີມູນຄ່າການສົ່ງອອກ 252,194.74 ໂດລາສະຫະລັດ, 5,887.00 ໂດລາສະຫະລັດ, ແລະ 1,485,501.12 ໂດລາສະຫະລັດ ຕາມລຳດັບ.

ສຳລັບສິນຄ້າໃນກຸ່ມອຸດສາຫະກຳ ເຫັນວ່າ ເປັນກຸ່ມສິນຄ້າທີ່ມີມູນຄ່າການສົ່ງອອກສູງທີ່ສຸດໃນຕະຫຼອດໄລຍະເວລາ 03 ປີ ຄື: 2015, 2016, ແລະ 2017, ຊຶ່ງວ່າສິນຄ້າສົ່ງອອກໃນກຸ່ມນີ້ແມ່ນ ມີແນວໂນ້ມເພີ່ມຂຶ້ນໃນແຕ່ລະປີ 407,365,236.50 ໂດລາສະຫະລັດ, 445,902,550.33 ໂດລາສະຫະລັດ, ແລະ 660,657,638.58 ໂດລາສະຫະລັດ ຕາມລຳດັບ. ສຳລັບສິນຄ້າທີ່ບອນຢູ່ໃນກຸ່ມ ເຄື່ອງປ່າຂອງດົງ ເຫັນວ່າ ມູນຄ່າການສົ່ງອອກມີລັກສະນະເພີ່ມຕະຫຼອດໃນໄລຍະເວລາ 03 ປີ (2015-2017) ມີມູນຄ່າ 1,117,342.92 ໂດລາສະຫະລັດ, 2,163,804.97 ໂດລາສະຫະລັດ, ແລະ 4,236,319.86 ໂດລາສະຫະລັດ ຕາມລຳດັບ. ສິນຄ້າໃນກຸ່ມ ແກ້ວປະເສີດອື່ນໆ ເຫັນວ່າ ມູນຄ່າການສົ່ງອອກແມ່ນ ມີລັກສະນະເພີ່ມຂຶ້ນຕະຫຼອດໄລຍະເວລາ 03 ປີ 2015, 2016, ແລະ 2017 ມີມູນຄ່າ 5,742.50 ໂດລາສະຫະລັດ, 15,975.00 ໂດລາສະຫະລັດ, ແລະ 245,358.80 ໂດລາສະຫະລັດ ຕາມລຳດັບ. ສິນຄ້າໃນກຸ່ມ ແຮ່ທາດ ເຫັນວ່າ ມູນຄ່າການສົ່ງອອກມີລັກສະນະຫຼຸດໜ້ອຍຖອຍລົງໃນແຕ່ລະປີ. ໃນປີ 2015, 2016, ແລະ 2017 ມີມູນຄ່າ 76,736,960.96 ໂດລາສະຫະລັດ, 39,245,323.60 ໂດລາສະຫະລັດ, ແລະ

3,908,117.44 ໂດລາສະຫະລັດ ຕາມລຳດັບ. ສຳລັບສິນຄ້າໃນກຸ່ມ ໂລຫະ ແລະ ເສດຕ່າງໆ ໃນປີ 2015 ແມ່ນ ບໍ່ມີການສົ່ງອອກສິນຄ້າປະເພດນີ້ເລີຍ, ພໍມາເຖິງປີ 2016 ແມ່ນມີການສົ່ງອອກສິນຄ້າໃນກຸ່ມນີ້ ໂດຍມີມູນຄ່າການສົ່ງອອກ 119,715.20 ໂດລາສະຫະລັດ, ແລະ ປີ 2017 ມູນຄ່າການສົ່ງອອກຫຼຸດລົງຈາກປີທີ່ຜ່ານມາ ມູນຄ່າມີພຽງ 21,384.00 ໂດລາສະຫະລັດ. ສິນຄ້າໃນກຸ່ມ ໄຟຟ້າສົ່ງອອກ[3] ເຫັນວ່າ ມູນຄ່າການສົ່ງອອກຂອງສິນຄ້າໃນກຸ່ມດັ່ງກ່າວມີລັກສະນະຂຶ້ນໆລົງໆພຽງເລັກໜ້ອຍແຕ່ລະປີ ຄື: 2015, 2016, ແລະ 2017 ມີມູນຄ່າ 33,512,961.23 ໂດລາສະຫະລັດ, 49,612,612.16 ໂດລາສະຫະລັດ. 46,464,824.16 ໂດລາສະຫະລັດ ຕາມລຳດັບ. ແລະ ສຸດທ້າຍແມ່ນ ກຸ່ມສິນຄ້າປະເພດ ໄມ້ ແລະ ປະລິດຕະພັນໄມ້ ເຫັນວ່າ ມີແນວໂນ້ມໃນການຫຼຸດລົງໃນແຕ່ລະໄລຍະຄື 2015, 2016, ແລະ 2017 ມີມູນຄ່າ 28,551,866.38 ໂດລາສະຫະລັດ, 19,706,494.91 ໂດລາສະຫະລັດ, ແລະ 25,881,004.865 ໂດລາສະຫະລັດ ຕາມລຳດັບ. (ລາຍລະອຽດສາມາດເບິ່ງຕາມເອກະສານຊ້ອນທ້າຍທີ 13)

**ຮູບສະແດງ 03** ກຸ່ມສິນຄ້າສົ່ງອອກຈາກ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າ 2015, 2016, ແລະ 2017




## 2.3 ປະເພດແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ CO)

ໃນປີ 2017 ສປປ ລາວ ສົ່ງອອກສິນຄ້າພາຍໃຕ້ສິດທິພິເສດທາງການຄ້າ ໂດຍນຳໃຊ້ທັງໝົດ 12 ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າ, ແລະ ໄດ້ອອກທັງໝົດຈຳນວນ 30,564 ຊຸດ ທີ່ສົ່ງໄປ 39 ປະເທດ. ມູນຄ່າການສົ່ງອອກທັງໝົດໃນປີ 2017 ແມ່ນ 1,390,664,591.66 ໂດລາສະຫະລັດ ເມື່ອທຽບໃສ່ສອງປີທີ່ຜ່ານມາຄື 2015 ແລະ 2016 ເຫັນວ່າ ມີເປີເຊັນເພີ່ມຂຶ້ນຫຼາຍພໍສົມຄວນຄື 18.60% ແລະ 22.96% ຕາມລຳດັບ.

ໃນໄລຍະ 03 ປີ ທີ່ຜ່ານມາເຫັນວ່າ ແບບຟອມ CO ທີ່ມີການນຳໃຊ້ຫຼາຍກວ່າໝູ່ແມ່ນ ຟອມ D, AT, ແລະ A ຕາມລຳດັບ, ໂດຍສະແດງໃຫ້ເຫັນໃນມູນຄ່າການສົ່ງອອກພາຍໃຕ້:① ຟອມ D ໃນປີ 2015, 2016 ແລະ 2017 ມີມູນຄ່າການສົ່ງອອກ 645,899,060.39, 587,527,698.57 ແລະ 701,445,653.65 ໂດລາສະຫະລັດ ຕາມລຳດັບ. ② ຟອມ AT ສຳລັບເຄື່ອງນຸ່ງຫົ່ມໄປສະຫະພາບເອີຣົບ ໃນປີ 2015, 2016 ແລະ 2017 ມີມູນຄ່າການສົ່ງອອກ 153,720,529.81, 208,639,287.00, ແລະ 240,044,139.75 ໂດລາ

[3] ສຳລັບໄຟຟ້າສົ່ງອອກຂອງ ສປປ ລາວ ແມ່ນ ສົ່ງອອກພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ຟອມ D), ຊຶ່ງແຂວງທີ່ມີການສົ່ງອອກໄຟຟ້າແມ່ນ ອັດຕະປື ແລະ ເຊກອງ (ເຂື່ອນໄຟຟ້າເຊຂະໜານ 01 ແລະ ເຊຂະໜານ 03)

ສະຫະລັດ ຕາມລຳດັບ. ③ ຟອມ A ສຳລັບຜະລິດຕະພັນທົ່ວໄປ ໃນປີ 2015, 2016 ແລະ 2017 ມີມູນຄ່າ 119,259,595.61, 91,300,860.20, ແລະ 154,808,254.16 ໂດລາສະຫະລັດ ຕາມລຳດັບ. ນອກຈາກນັ້ນ, ສັງເກດເຫັນວ່າ ແບບຟອມທີ່ມີແນວໂນ້ມເພີ່ມຂຶ້ນໃນແຕ່ລະປີມີ ຟອມ AT, S, SPT, AJ, AANZ ແລະ CO-Korea. ພ້ອມດຽວກັນກໍຍັງມີແບບຟອມທີ່ມີແນວໂນ້ມການນຳໃຊ້ຫຼຸດລົງໃນແຕ່ລະປີ ເປັນຕົ້ນແມ່ນ: ຟອມ AI ແລະ DFTP. ສ່ວນຟອມອື່ນໆນັ້ນແມ່ນ ມີການນຳໃຊ້ຫຼາຍໜ້ອຍແມ່ນ ຂຶ້ນກັບຄວາມຕ້ອງການສັ່ງຊື້ຂອງປະເທດຜູ້ນຳເຂົ້າໃນແຕ່ລະໄລຍະ.

ແບບຟອມທີ່ມີການນຳໃຊ້ທີ່ເພີ່ມຂຶ້ນຫຼາຍແມ່ນ ຟອມ SPT ແລະ AANZ, ຊຶ່ງຟອມ SPT ໃນປີ 2016 ເພີ່ມຂຶ້ນ 55.91% ແລະ ປີ 2017 ແມ່ນ 232.86%; ສ່ວນຟອມ AANZ ໃນປີ 2016 ເພີ່ມຂຶ້ນ 191% ແລະ ປີ 2017 ແມ່ນ 294.16% ຖືວ່າເປັນອັດຕາທີ່ເພີ່ມຂຶ້ນສູງສຸດໃນບັນດາແບບຟອມທັງໝົດ. ແຕ່ໃນຂະນະດຽວກັນກໍ່ມີແບບຟອມທີ່ມີການນຳໃຊ້ນັບມື້ນັບໜ້ອຍລົງຄື ຟອມ APTA. ນອກນັ້ນ, ຍັງມີແບບຟອມ DFTP ທີ່ບໍ່ມີການນຳໃຊ້ເລີຍໃນປີ 2017. ໃນຂະນະທີ່ໃນປີ 2015 ມີການນຳໃຊ້ແບບຟອມດັ່ງກ່າວຫຼາຍພໍສົມຄວນ ລວມມູນຄ່າການສົ່ງອອກແມ່ນ 31,514,528.74 ໂດລາສະຫະລັດ, ພໍມາເຖິງປີ 2016 ການນຳໃຊ້ຟອມນີ້ກໍ່ມີການຫຼຸດລົງເຫຼືອພຽງ 808,577.30 ໂດລາສະຫະລັດ ເທົ່ານັ້ນ.

**ຕາຕະລາງ 01:** ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າປີ 2015, 2016 ແລະ 2017

(ຫົວໜ່ວຍເປັນໂດລາສະຫະລັດ:USD)

| ລ/ດ | ຊະນິດຟອມ | ຈຳນວນຟອມທີ່ອອກໃນປີ 2017 (ຊຸດ) | ມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດ | | |
|---|---|---|---|---|---|
| | | | ປີ 2017 | ປີ 2016 | ປີ 2015 |
| 1 | AT | 7,302.00 | 240,044,139.75 | 208,639,287.00 | 153,720,529.81 |
| 2 | A | 3,378.00 | 154,808,254.16 | 91,300,860.20 | 119,259,595.61 |
| 3 | D | 16,699.00 | 701,445,653.65 | 587,527,698.57 | 645,899,060.39 |
| 4 | E | 509.00 | 74,867,633.01 | 79,821,164.73 | 53,116,627.72 |
| 5 | S | 1,794.00 | 150,691,827.51 | 86,286,259.88 | 66,298,344.96 |
| 6 | SPT | 25.00 | 18,254,705.00 | 5,484,220.00 | 3,517,578.13 |
| 7 | AI | 118.00 | 22,709,709.75 | 56,103,488.07 | 78,553,390.64 |
| 8 | AK | 192.00 | 4,293,263.91 | 2,734,848.59 | 8,357,379.12 |
| 9 | AJ | 299.00 | 18,866,332.80 | 11,300,748.79 | 11,124,538.24 |
| 10 | AANZ | 43.00 | 1,262,965.52 | 320,416.90 | 110,107.99 |
| 11 | DFTP | NA | NA | 808,577.30 | 31,514,528.74 |
| 12 | APTA | 1.00 | 12,380.00 | 6,340.00 | 18,300.00 |
| 13 | CO-Korea | 204.00 | 3,407,726.60 | 1,496,593.90 | 1,048,619.63 |
| ລວມ: | | 30,564.00 | 1,390,664,591.66 | 1,131,830,503.93 | 1,172,538,600.98 |

### 2.3.1 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນເຄື່ອງນຸ່ງຫົ່ມ (ຟອມ AT)

ໃນປີ 2017 ເຫັນວ່າ ມູນຄ່າການສົ່ງອອກຜະລິດຕະພັນເຄື່ອງນຸ່ງຫົ່ມໄປຍັງບັນດາປະເທດໃນສະຫະພາບເອີຣົບ ໂດຍນຳໃຊ້ຟອມ AT ມີມູນຄ່າ 240,044,139.75 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ເພີ່ມຂຶ້ນ 15.05%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 03, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ຊຸດສູດສຳລັບແມ່ຍິງ ຫຼື ເດັກຍິງ (ລະຫັດພາສີ 6204) ມູນຄ່າ 94,964,484.84 ໂດລາສະຫະລັດ, ຮອງລົງມາແມ່ນຊຸດສູດສຳລັບ ຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203) ມູນຄ່າ 35,038,779.86 ໂດລາສະຫະລັດ, ແລະ ເສື້ອກັນໜາວ (ລະຫັດພາສີ 6110) ມູນຄ່າ 30,373,076.26 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າ

ຂອງລາຍການສິນ ຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ຊຸດສູດ ສໍາລັບແມ່ຍິງ ຫຼື ເດັກຍິງ (ລະຫັດພາສີ 6204) ເພີ່ມຂຶ້ນຫຼາຍກວ່າໝູ່ເຖິງ2950.62%, ເສື້ອຊ້ອນໃນຜູ້ຍິງ (ລະຫັດພາສີ 6212) ເພີ່ມຂຶ້ນ 2629.60%, ແລະ ເສື້ອກັນໜາວ (ລະຫັດພາສີ 6110) ເພີ່ມຂຶ້ນ 805%. ໃນຂະນະສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203) ຫຼຸດລົງ 64.50%, ແລະ ເສື້ອຢືດຄໍມົນ (ລະຫັດພາສີ 6109) ຫຼຸດລົງ 21%.

ສໍາລັບປະເທດທີ່ມີການສົ່ງອອກໃນປີ 2017 ໃນມູນຄ່າທີ່ຫຼາຍກວ່າໝູ່ສາມອັນດັບຕົ້ນແມ່ນ ເຢຍລະມັນ, ສະວີເດັນ, ແລະ ອັງກິດ. ຊຶ່ງມີມູນຄ່າ 85,268,601.20 ໂດລາສະຫະລັດ, 59,884,059.09 ໂດລາສະຫະລັດ, ແລະ 40,859,136.24 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດໃນສະຫະພາບເອີຣົບໃນປີ 2017 ກັບ 2016 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍແມ່ນໄປ ໂອຕຣິສ, ແອັກລັງ, ແລະ ປ໋ອກຕຸຍການ. ໂດຍມີອັດຕາການເພີ່ມຂຶ້ນແມ່ນ 760.25%, 254.25%, ແລະ 147.34% ຕາມລໍາດັບ. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ໂຮນລັງ 55.70%, ຝຣັ່ງ 17.78%, ແລະ ເຢຍລະມັນ 1.98%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 03, 04, ແລະ ເອກະສານຊ້ອນທ້າຍທີ 01)

**ຮູບສະແດງ 04**: ສິນຄ້າສົ່ງອອກພາຍໃຕ້ທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ



**ຮູບສະແດງ 05:** ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ




### 2.3.2 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນທົ່ວໄປ (ຟອມ A)

ໃນປີ 2017 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດແກ່ ສປປ ລາວ ແບບຝ່າຍດຽວ (ຟອມ A) ຄື: ສະຫະພາບເອີຣົບ, ຍີ່ປຸ່ນ, ນອກແວ, ສະວິດ ແລະ ອື່ນໆ ໃນມູນຄ່າ 154,808,254.16 ໂດລາສະຫະລັດ, ເມື່ອທຽບໃສ່ປີ 2016 ເຫັນວ່າເພີ່ມຂຶ້ນ 69.56%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 05, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ເກີບ (ລະຫັດພາສີ 6403) ມູນຄ່າ 57,576,693.01 ໂດລາສະຫະລັດ, ຮອງລົງມາແມ່ນ ນໍ້າຕານ (ລະຫັດພາສີ 1701) ມູນຄ່າ 29,242,560.00 ໂດລາສະຫະລັດ, ແລະ ກາເຟ (ລະຫັດພາສີ 0901) ມູນຄ່າ 24,886,412.76 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ເສື້ອບລາວສ໌ສໍາລັບແມ່ຍິງ (ລະຫັດພາສີ 6206) ເພີ່ມຂຶ້ນຫຼາຍກວ່າໝູ່ 7297.38%, ເສື້ອເຊີດທ໌ (6205) ເພີ່ມຂຶ້ນ 717%, ແລະ ຊຸດວອມກິລາ (ລະຫັດພາສີ6211) 444.2%. ໃນຂະນະດຽວກັນສິນຄ້າມີມູນຄ່າການສົ່ງອອກຫຼຸດລົງມີພຽງ ກາເຟ (ລະຫັດພາສີ 0901) ຫຼຸດລົງ 28.72%.

ສໍາລັບປະເທດທີ່ມີການສົ່ງອອກໃນປີ 2017, ເຫັນວ່າມູນຄ່າສົ່ງອອກຫຼາຍກວ່າໝູ່ສາມອັນດັບຕົ້ນແມ່ນ ຍີ່ປຸ່ນ, ໂປໂລຍ, ແລະ ປ່ອກຕຸຍການ. ຊຶ່ງມີມູນຄ່າ 90,405,848.16 ໂດລາສະຫະລັດ, 16,924,963.93 ໂດລາສະຫະລັດ, ແລະ 13,260,602.40 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນທົ່ວໄປ ໃນປີ 2017 ກັບ 2016 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍແມ່ນ ໄປ ໂປໂລຍ, ປ່ອກຕຸຍການ, ແລະ ຝຣັ່ງ. ໂດຍມີອັດຕາການເພີ່ມຂຶ້ນແມ່ນ 3,228.57%, 1291.32%, ແລະ 248.74% ຕາມລໍາດັບ. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ອັງກິດ 77.77%, ແບັນຊິກ 50.75%, ແລະ ສ.ອາເມລິກາ 31.41%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 05, 06, ແລະ ເອກະສານຊ້ອນທ້າຍທີ 02)

**ຮູບສະແດງ 06:** ສິນຄ້າສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)




**ຮູບສະແດງ 07:** ປະເທດສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)



### 2.3.3 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ຟອມ D)

ໃນປີ 2017 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ 10 ປະເທດສະມາຊິກອາຊຽນ ໂດຍນຳໃຊ້ສິດທິພິເສດທາງການຄ້າ (ຟອມ D) ມີມູນຄ່າສູງເຖິງ 701,445,653.65 ໂດລາສະຫະລັດ ເມື່ອທຽບໃສ່ມູນຄ່າການສົ່ງອອກໃນປີ 2016 ເຫັນວ່າ ເພີ່ມຂຶ້ນ 19.39%, ຊຶ່ງແບບຟອມນີ້ເປັນແບບຟອມທີ່ມີການນຳໃຊ້ຫຼາຍທີ່ສຸດ. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 07, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 159,957,621.20 ໂດລາສະຫະລັດ, ຮອງລົງມາແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 134,260,165.01 ໂດລາສະຫະລັດ, ແລະ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 70,167,736.54 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ກາເຟ (ລະຫັດພາສີ 0901) ເພີ່ມຂຶ້ນ 439%, ຮອງລົງມາແມ່ນ ລົດຈັກ (ລະຫັດພາສີ 8711) ເພີ່ມຂຶ້ນ 550.24%, ແລະ ໝາກໄມ້ສົດອື່ນໆ (ລະຫັດພາສີ 0810) ເພີ່ມຂຶ້ນ 230.43%. ໃນຂະນະດຽວກັນກໍ່ມີບາງສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງເຊັ່ນ: ທອງບໍລິສຸດ (ລະຫັດພາສີ 7403) ຫຼຸດລົງ 43.36%, ແລະ ພະລັງງານໄຟຟ້າ (ລະຫັດພາສີ 2716) ຫຼຸດລົງ 6.34%.

ສຳລັບປະເທດທີ່ ສປປ ລາວ ມີການສົ່ງອອກໃນປີ 2017, ຊຶ່ງວ່າມູນຄ່າສົ່ງອອກຫຼາຍກວ່າໝູ່ສາມອັນດັບຕົ້ນແມ່ນ ໄທ ມູນຄ່າ 553,369,405.89 ໂດລາສະຫະລັດ, ຮອງລົງມາແມ່ນ ສສ ຫວຽດນາມ ມູນຄ່າ 119,856,468.87 ໂດລາສະຫະລັດ, ແລະ ກຳປູເຈຍ ມູນຄ່າ 17,545,922.56 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກອາຊຽນ ໃນປີ 2017 ກັບ 2016 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍແມ່ນ ໄປ ກຳປູເຈຍ, ສສ ຫວຽດນາມ, ແລະ ໄທ. ໂດຍມີອັດຕາເພີ່ມຂຶ້ນແມ່ນ 163.55%, 22.60%, ແລະ 1.56% ຕາມລຳດັບ. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ສ.ມຽນມາ 48.83%, ຟີລິບປິນ 16.49%, ແລະ ມາເລເຊຍ 2.22%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 07, 08, ແລະ ເອກະສານຊ້ອນທ້າຍທີ 03)

**ຮູບສະແດງ 08** ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ D



**ຮູບສະແດງ 09:** ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ D




### 2.3.4 ສັນຍາການຄ້າເສລີ ອາຊຽນ - ສປ ຈີນ (ຟອມ E)

ໃນປີ 2017 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສປ ຈີນ ໂດຍນຳໃຊ້ສັນຍາການຄ້າເສລີ ອາຊຽນ-ສປ ຈີນ (ຟອມ E) ມີມູນຄ່າ 74,867,633.02 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ຫຼຸດລົງເລັກໜ້ອຍ 6.21%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 09, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ຝຸ່ນ/ປຸ໋ຍ (ລະຫັດພາສີ 3104) ມູນຄ່າ 22,642,746.86 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 15,613,730.50 ໂດລາສະຫະລັດ, ແລະ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 9,791,249.42 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ກາເຟ (ລະຫັດພາສີ 0901) ເພີ່ມຂຶ້ນ 1014.57%, ເຄື່ອງເຟີນີເຈີອື່ນໆ (9403) ເພີ່ມຂຶ້ນ 661.50%, ແລະ ແປ້ງມັນ (ລະຫັດພາສີ 1108) ເພີ່ມຂຶ້ນ 114.19%. ໃນຂະນະສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ເຂົ້າ (ລະຫັດພາສີ 1006) ຫຼຸດລົງ 30.87%, ແລະ ຝຸ່ນ/ປຸ໋ຍ (ລະຫັດພາສີ 3104) ຫຼຸດລົງ 24.72%. ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ ຟອມ E ມີພຽງ ສປ ຈີນ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 09, ແລະ ເອກະສານຊ້ອນທ້າຍທີ 04)

**ຮູບສະແດງ 10:** ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ E




**2.3.5 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (ຟອມ S)**

ໃນປີ 2017 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ ສສ ຫວຽດນາມ ໂດຍນຳໃຊ້ສິດທິພິເສດທາງການຄ້າໂດຍນຳໃຊ້ຟອມ S ມີມູນຄ່າ 150,691,827.51 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ເພີ່ມຂຶ້ນຫຼາຍສູງເຖິງ 74.64%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 10, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 60,745,178.26 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 19,497,469.08 ໂດລາສະຫະລັດ, ແລະ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 17,313,395.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ຖ່ານໄມ້ (ລະຫັດພາສີ 4402) ເພີ່ມຂຶ້ນ 7824.14%, ຫົວມັນຕົ້ນ (ລະຫັດພາສີ 0714) ເພີ່ມຂຶ້ນ 636.80%, ແລະ ໝາກໄມ້ສົດອື່ນໆ (ລະຫັດພາສີ 0810) ເພີ່ມຂຶ້ນ 351.95%. ໃນຂະນະດຽວກັນສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ສັດປະເພດງົວຄວາຍ (ລະຫັດພາສີ 1020), ນ້ຳຕານທີ່ໄດ້ຈາກອ້ອຍ (ລະຫັດພາສີ 1701), ແລະ ຫີນກາວຢິບຊຳ (ລະຫັດພາສີ 2520) ຫຼຸດລົງ 39.18%, 12.75%, ແລະ 7.33% ຕາມລຳດັບ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 10, ແລະ ເອກະສານຊ້ອນທ້າຍທີ 05)

**ຮູບສະແດງ 11** ສິນຄ້າການສົ່ງອອກໂດຍນຳໃຊ້ແບບຟອມ S




### 2.3.6 ສິດທິພິເສດການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (ຟອມ SPT)

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ ສປ ຈີນ ໂດຍນຳໃຊ້ສິດທິພິເສດທາງການຄ້າ ໂດຍນຳໃຊ້ຟອມ SPT ມີມູນຄ່າ 18,254,705.00 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າເພີ່ມຂຶ້ນຫຼາຍ ສູງເຖິງ 232.86%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກໄວ້ໃນຕາຕະລາງ 12, ຊຶ່ງວ່າສິນຄ້າທີ່ສົ່ງອອກມີພຽງລາຍການດຽວກໍ່ຄື ຢາງທຳມະຊາດ (ລະຫັດພາສີ 4001).

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 02, ແລະ ເອກະສານຊ້ອນທ້າຍທີ 06)

**ຕາຕະລາງ 02:** ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ SPT

ຫົວໜ່ວຍເປັນໂດລາສະຫະລັດ (USD)

| ລ/ດ | ລະຫັດພາສີ (HS Code) | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2017 | 2016 |
| 1 | 4001 | ຢາງທຳມະຊາດ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ໃບຫຼືແຜ່ນຍາວ | 18,254,705.00 | 5,304,220.00 |
| 2 | ອື່ນໆ | | NA | 180,000.00 |
| ລວມ: | | | 18,254,705.00 | 5,484,220.00 |

### 2.3.7 ສັນຍາການຄ້າເສລີ ອາຊຽນ - ອິນເດຍ (ຟອມ AI)

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອິນເດຍ ໂດຍນຳໃຊ້ສິດທິພິເສດທາງການຄ້າພາຍໃຕ້ຟອມ AI ມີມູນຄ່າ 22,709,709.75 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ຫຼຸດລົງຫຼາຍພໍສົມຄວນ 59.52%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 11, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 10,066,782.52 ໂດລາສະຫະລັດ,

ຮອງລົງມາແມ່ນ ໄມ້ອັດ (ລະຫັດພາສີ 4412) ມູນຄ່າ 6,345,805.65 ໂດລາສະຫະລັດ, ແລະ ແຜ່ນສຳລັບເຮັດໄມ້ເວີເນຍ (ລະຫັດພາສີ 4408) ມູນຄ່າ 3,929,075.62 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນແມ່ນ ມີພຽງ ທອງບໍລິສຸດ (ລະຫັດພາສີ 7403) 42.98%. ໃນຂະນະທີ່ສິນຄ້າທີ່ມີມູນຄ່າສົ່ງອອກຫຼຸດລົງມີພຽງ ແຜ່ນສຳລັບເຮັດໄມ້ເວີເນຍ (ລະຫັດພາສີ 4408) ຫຼຸດລົງ 43.15%. ໃນປີ 2017 ມີສິນຄ້າທີ່ສົ່ງອອກໃໝ່ຫຼາຍລາຍການເຊັ່ນ: ກາເຟ, ເກືອ, ແຮ່ຊືນ, ສິ່ງປຸງແຕ່ງສຳລັບອາບນ້ຳ, ແລະ ອື່ນໆອີກຫຼາຍລາຍການ.ນອກຈາກນັ້ນ, ໃນປີ 2016 ໃນລາຍສິນຄ້າອື່ນໆເຫັນວ່າມີມູນຄ່າສູງຫຼາຍ, ເນື່ອງຈາກວ່າໃນປີດັ່ງກ່າວນີ້ມີການສົ່ງອອກແຮ່ທອງ (ລະຫັດພາສີ 2603) ໄປປະເທດອິນເດຍ ມີມູນຄ່າສູງເຖິງ 38,191,101.6 ໂດລາສະຫະລັດ.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວນີ້ແມ່ນມີ 02 ປະເທດຄື: ອິນເດຍ ມູນຄ່າ 12,642,927.23 ໂດລາສະຫະລັດ ແລະ ໄທ ມູນຄ່າ 10,066,782.52 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2017 ກັບ 2016 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນແມ່ນ ໄປ ໄທ ເພີ່ມຂຶ້ນ 26.11%. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ອິນເດຍ ຫຼຸດລົງເຖິງ 73.72%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 11, 12, ແລະ ເອກະສານຊ້ອນທ້າຍທີ 07)

**ຮູບສະແດງ** 12 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AI




**ຮູບສະແດງ** 13: ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AI



## 2.3.8 ສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ (ຟອມ AK)

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສ.ເກົາຫຼີ ໂດຍນຳໃຊ້ສິດທິພິເສດທາງການຄ້າໂດຍນຳໃຊ້ຟອມ AK ມີມູນຄ່າ 4,293,263.91 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າເພີ່ມຂຶ້ນ 56.98%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 13, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ໄຮໂດຣມີເຕີ (ລະຫັດພາສີ 9025) ມູນຄ່າ 2,059,077.61 ໂດລາສະຫະລັດ, ຮອງລົງມາແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 813,506.01 ໂດລາສະຫະລັດ, ແລະ ແກ່ນພືດ (ລະຫັດພາສີ 1207) ມູນຄ່າ 485,045.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນແມ່ນ ໝາກໄມ້ເປືອກແຂງອື່ນໆ (ລະຫັດພາສີ 2008) ເພີ່ມຂຶ້ນ 5634.51%, ເກີບ (ລະຫັດພາສີ 6403) ເພີ່ມຂຶ້ນ 1879.53%, ແລະ ໄຮໂດຣມີເຕີ (ລະຫັດພາສີ 9025) ເພີ່ມຂຶ້ນ 1771.58%. ຊຶ່ງໃນຂອບ AK 1-10 ລາຍການສິນຄ້າສົ່ງອອກຫຼັກແມ່ນ ບໍ່ມີສິນຄ້າໃດທີ່ມີເປີເຊັນຫຼຸດລົງ, ນອກຈາກນັ້ນ ຍັງມີບາງລາຍການສິນຄ້າທີ່ມີການສົ່ງອອກເພີ່ມຂຶ້ນຄື: ແກ່ນພືດ, ແລະ ເບຍ.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວນີ້ມີພຽງສອງປະເທດຄື: ສ.ເກົາຫຼີ ມູນຄ່າ 2,234,186.30 ໂດລາສະຫະລັດ, ແລະ ໄທ ມູນຄ່າ 2,059,077.61 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2017 ກັບ 2016 ເຫັນວ່າ ການສົ່ງອອກໄປປະເທດ ສ.ເກົາຫຼີ ແມ່ນເພີ່ມຂຶ້ນ 18.31% ແລະ ໃນປີ 2017 ສປປ ລາວ ກໍ່ໄດ້ຂະຫຍາຍຕະຫຼາດໃນການສົ່ງອອກສິນຄ້າໃນຂອບສັນຍານີ້ໄປ ປະເທດໄທ ອີກດ້ວຍ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 13, 14, ແລະ ເອກະສານຊ້ອນທ້າຍທີ 08)

**ຮູບສະແດງ 14:** ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AK



**ຮູບສະແດງ 15:** ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AK




### 2.3.9 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ອາຊຽນ-ຍີ່ປຸ່ນ (ຟອມ AJ)

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ຍີ່ປຸ່ນ ໂດຍນຳໃຊ້ສິດທິພິເສດທາງການຄ້າໂດຍນຳໃຊ້ຟອມ AJ ມີມູນຄ່າ 18,866,332.80 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ເພີ່ມຂຶ້ນ 66.95%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 15, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ເຄື່ອງສຳເລັດຮູບອື່ນໆ (ລະຫັດພາສີ 6307) ມູນຄ່າ 7,308,319.11 ໂດລາສະຫະລັດ, ຮອງລົງມາແມ່ນ ສິ່ງປຸງແຕ່ງສຳລັບການອາບນ້ຳ (ລະຫັດພາສີ 3307) ມູນຄ່າ 2,622,502.66 ໂດລາສະຫະລັດ, ແລະ ໄສ້ງບາຣ໌ (ລະຫັດພາສີ 6115) ມູນຄ່າ 1,808,200.63 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນແມ່ນ ເຄື່ອງສຳເລັດຮູບອື່ນໆ (ລະຫັດພາສີ 6307) 640.28%, ໂສ້ງສະລິບສຳລັບແມ່ຍິງ ຫຼື ເດັກຍິງ (ລະຫັດພາສີ 6108) 529.66%, ແລະ ຕົ້ນໄມ້ (ລະຫັດພາສີ 1211) 157.77%.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວແມ່ນມີພຽງສອງປະເທດຄື: ຍີ່ປຸ່ນ ມູນຄ່າ 17,801,459.36 ໂດລາສະຫະລັດ, ແລະ ໄທ ມູນຄ່າ 1,064,873.44 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2017 ກັບ 2016 ເຫັນວ່າ ການສົ່ງອອກທີ່ເພີ່ມຫຼາຍຂຶ້ນແມ່ນ ໄທ 181.50%, ແລະ ຍີ່ປຸ່ນ 63.12%. ສຳລັບປີ 2017 ແມ່ນ ບໍ່ມີການສົ່ງອອກໄປສິງກະໂປ ຄືປີທີ່ຜ່ານມາ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 15, 16, ແລະ ເອກະສານຊ້ອນທ້າຍທີ 09)

ຮູບສະແດງ 16 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AJ




ຮູບສະແດງ 17 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AJ




## 2.3.10 ສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (ຟອມ AANZ)

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອົດສະຕາລີ-ນິວຊີແລນ ໂດຍນຳໃຊ້ສິດທິພິເສດທາງການຄ້າໂດຍນຳໃຊ້ຟອມ AANZ ມີມູນຄ່າ 1,262,965.52 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າ ເພີ່ມຂຶ້ນຫຼາຍກວ່າໝູ່ໃນບັນດາແບບຟອມທີ່ໄດ້ຮັບສິດທິພິເສດທາງການຄ້າ ເພີ່ມສູງຂຶ້ນເຖິງ 294.16%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ໄວ້ໃນເອກະສານຄັດຕິດທີ 17, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ຊຸດສູດ ສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203) ມູນຄ່າ 687,090.75 ໂດລາສະຫະລັດ, ຮອງລົງມາແມ່ນ ເຄື່ອງເອ້ຍ້ອງ (ລະຫັດພາສີ 7113) ມູນຄ່າ 245,358.80 ໂດລາສະຫະລັດ,

ແລະ ຊຸດສູດສຳລັບແມ່ຍິງ ແລະ ເດັກຍິງ (ລະຫັດພາສີ 6204) ມູນຄ່າ 171,556.57 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີສິນຄ້າລາຍການໃໝ່ຈຳນວນຫຼາຍລາຍການທີ່ມີການສົ່ງອອກ ເຊັ່ນ: ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203), ເຄື່ອງເອ້ຍ້ອງ (ລະຫັດພາສີ 7113), ຊຸດສູດສຳລັບແມ່ຍິງ ຫຼື ເດັກຍິງ (ລະຫັດພາສີ 6204), ແລະ ອື່ນໆ. ສຳລັບລາຍການທີ່ມີການສົ່ງອອກເພີ່ມຂຶ້ນແມ່ນ ເສື້ອຢືດຄໍມົນ (ລະຫັດພາສີ 6109) 0.39%. ໃນຂະນະທີ່ສິນຄ້າທີ່ເປີເຊັນຫຼຸດລົງແມ່ນ ເສື້ອກັນໜາວ (ລະຫັດພາສີ 6110) ຫຼຸດລົງ 83.19%, ແລະ ເກີບ (ລະຫັດພາສີ 6403) 57.36%.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວແມ່ນມີພຽງສອງປະເທດຄື: ອົດສະຕາລີ ມູນຄ່າ 1,227,613.22 ໂດລາສະຫະລັດ, ແລະ ນິວຊີແລນ ມູນຄ່າ 35,352.30 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2017 ກັບ 2016 ເຫັນວ່າ ການສົ່ງອອກທີ່ເພີ່ມຫຼາຍຂຶ້ນແມ່ນ ອົດສະຕາລີ 332.57%. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ນິວຊີແລນ 3.46%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 17, 18, ແລະ ເອກະສານຊ້ອນທ້າຍທີ 10)

**ຮູບສະແດງ** 18 ສິນຄ້າສົ່ງອອກໂດຍນຳໃຊ້ແບບຟອມ AANZ




**ຮູບສະແດງ** 19 ປະເທດສົ່ງອອກສິນຄ້າໂດຍນຳໃຊ້ແບບຟອມ AANZ



**2.3.11 ສັນຍາການຄ້າ ອາຊີ-ປາຊີຟິກ (ຟອມ APTA)**

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດໂດຍນຳໃຊ້ຟອມ APTA ມີມູນຄ່າການສົ່ງອອກພຽງແຕ່ 12,380.00 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າເພີ່ມຂຶ້ນ 95.27%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກໄວ້ໃນຕາຕະລາງ 03, ຊຶ່ງວ່າສິນຄ້າທີ່ສົ່ງອອກມີພຽງລາຍການດຽວກໍ່ຄື ນ້ຳໝາກໄມ້ (ລະຫັດພາສີ 2009). ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີເປີເຊັນເພີ່ມຂຶ້ນສູງເຖິງ 95.27%. ປະເທດທີ່ ສປປ ລາວ ສົ່ງອອກໂດຍນຳໃຊ້ຟອມ APTA ມີພຽງ ສ.ເກົາຫຼີ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 03, ແລະ ເອກະສານຊ້ອນທ້າຍທີ 11)

**ຕາຕະລາງ 03**: ສິນຄ້າທີ່ມີການສົ່ງອອກໂດຍນຳໃຊ້ແບບຟອມ APTA

ຫົວໜ່ວຍເປັນໂດລາສະຫະລັດ (USD)

| ລ/ດ | ລະຫັດພາສີ (HS Code) | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2017 | 2016 |
| 1 | 2009 | ນ້ຳໝາກໄມ້ (ລວມທັງນ້ຳເຫຼົ້າໝາກອາງຸ່ນທີ່ບໍ່ທັນໝັກ) ແລະ ນ້ຳພືດຜັກ, ທີ່ບໍ່ທັນໝັກ ແລະ ບໍ່ໃສ່ເຫຼົ້າ, ຈະຕື່ມນ້ຳຕານ ຫຼື ໃສ່ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ | 12,380.00 | 6,340.00 |
| ລວມ: | | | **12,380.00** | **6,340.00** |

**2.3.12 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (ຟອມ CO-Korea)**

ໃນປີ 2017 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ ສ.ເກົາຫຼີ ໂດຍນຳໃຊ້ຟອມ CO-Korea ມີມູນຄ່າ 3,407,726.60 ໂດລາສະຫະລັດ ເມື່ອທຽບໃສ່ປີ 2016 ເຫັນວ່າເພີ່ມຂຶ້ນຫຼາຍ ສູງເຖິງ 127.70%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 08 ໄວ້ໃນເອກະສານຄັດຕິດທີ 19, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 2,412,781.00 ໂດລາສະຫະລັດ, ຮອງລົງມາແມ່ນ ຖ່ານໄມ້ (ລະຫັດພາສີ 4402) ມູນຄ່າ 717,445.00 ໂດລາສະຫະລັດ, ແລະ ໝາກໄມ້ເປືອກແຂງ (ລະຫັດພາສີ 0801) ມູນຄ່າ 159,250.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2017 ກັບ 2016 ເຫັນວ່າ ມີສິນຄ້າຈຳນວນຫຼາຍລາຍການທີ່ມີການສົ່ງອອກເພີ່ມຂຶ້ນເຊັ່ນ: ໝາກກ້ວຍ (ລະຫັດພາສີ 0803) 16,800%, ຖ່ານໄມ້ (ລະຫັດພາສີ 4402) 2122.61%, ແລະ ກາເຟ (ລະຫັດພາສີ 0901) 534%. ນອກຈາກນັ້ນ, ຍັງມີຫຼາຍລາຍການສົ່ງອອກທີ່ເພີ່ມຂຶ້ນໃໝ່ ເຊັ່ນ: ໝາກພ້າວ (ລະຫັດພາສີ 0801), ໄມ້ອັດ (ລະຫັດພາສີ 4412), ໝາກໄມ້ເປືອກແຂງອື່ນໆ (ລະຫັດພາສີ 0802), ແລະ ອື່ນໆ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 19, ແລະ ເອກະສານຊ້ອນທ້າຍທີ 12)

ຮູບສະແດງ 20 ສິນຄ້າທີ່ມີການສົ່ງອອກໂດຍນຳໃຊ້ແບບຟອມ CO-Korea




3. **ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ**

3.1 **ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ**

ຕະຫຼອດໃນໄລຍະ 05 ປີ (2013-2017) ທີ່ຜ່ານມາ ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ ຈາກ 45 ປະເທດ, ໃນນັ້ນ ປະເທດທີ່ມີການນຳເຂົ້າເປັນອັນດັບຕົ້ນໆແມ່ນ ໄທ, ສສ ຫວຽດນາມ, ແລະ ສປ ຈີນ.

ໃນປີ 2017 ສປປ ລາວ ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 37 ປະເທດ. ໃນນັ້ນ, ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ສປ ຈີນ, ແລະ ສສ ຫວຽດນາມ; ມີມູນຄ່າການນຳເຂົ້າ ສູງເຖິງ 304,993,189.00 ໂດລາສະຫະລັດ, 64,499,541.00 ໂດລາສະຫະລັດ, ແລະ 64,391,292.00 ໂດລາສະຫະລັດ ຕາມລຳດັບ. ສຳລັບປະເທດທີ່ມີການນຳເຂົ້າໜ້ອຍກວ່າໝູ່ແມ່ນ ຟີລິບປິນ, ແມັກຊິກໂກ, ແລະ ເຊັກ; ຊຶ່ງມີມູນຄ່າການນຳເຂົ້າແມ່ນ 11,813.00 ໂດລາສະຫະລັດ, 18,535.00 ໂດລາສະຫະລັດ, ແລະ 26,880.00 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2016 ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 27 ປະເທດ. ໃນນັ້ນ, ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ, ແລະ ອິນໂດເນເຊຍ; ມີມູນຄ່າການນຳເຂົ້າສູງເຖິງ 324,477,344.00 ໂດລາສະຫະລັດ, 59,990,250.00 ໂດລາສະຫະລັດ, ແລະ 49,917,925.00 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການນຳເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ໂກຣເອເຊຍ, ຮັງກາລີ, ແລະ ນິວຊີແລນ; ຊຶ່ງມີມູນຄ່າ 19,482.00 ໂດລາສະຫະລັດ, 26,906.00 ໂດລາສະຫະລັດ, ແລະ 32,831.00 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2015 ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 09 ປະເທດ. ໃນນັ້ນ, ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ, ແລະ ສປ ຈີນ; ມີມູນຄ່າສູງເຖິງ 95,237,251.00 ໂດລາສະຫະລັດ, 58,343,576.00 ໂດລາສະຫະລັດ, ແລະ 16,535,523.00 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການນຳເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ໝູ່ເກາະໂກໂກສ, ຟີລິບປິນ, ແລະ ຍີ່ປຸ່ນ;

ຊຶ່ງມີມູນຄ່າ 1,830.00 ໂດລາສະຫະລັດ, 106,231.00 ໂດລາສະຫະລັດ, ແລະ 327,731.00 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2014 ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 09 ປະເທດ. ໃນນັ້ນ, ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ, ແລະ ສປ ຈີນ; ມີມູນຄ່າການສົ່ງອອກສູງເຖິງ 90,668,199.00 ໂດລາສະຫະລັດ, 54,759,917.00 ໂດລາສະຫະລັດ, ແລະ 12,137,406.00 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການນຳເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ສິງກະໂປ, ເທຣນນິດາດ ແລະ ໂຕບາໂກ, ແລະ ຍີ່ປຸ່ນ; ຊຶ່ງມີມູນຄ່າ 9,624.00 ໂດລາສະຫະລັດ, 15,787.00 ໂດລາສະຫະລັດ, ແລະ 25,267.00 ໂດລາສະຫະລັດ ຕາມລຳດັບ.

ສຳລັບປີ 2013 ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 31 ປະເທດ. ໃນນັ້ນ, ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ສສ ຫວຽດນາມ, ແລະ ສະວິດ; ມີມູນຄ່າການນຳເຂົ້າສູງເຖິງ 109,812,429.00 ໂດລາສະຫະລັດ, 46,348,729.00 ໂດລາສະຫະລັດ, ແລະ 26,454,545.00 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການນຳເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ໂຮນລັງ, ການາດາ, ແລະ ນໍອກແວ; ຊຶ່ງມີມູນຄ່າ 630.00 ໂດລາສະຫະລັດ, 1,498.00 ໂດລາສະຫະລັດ, ແລະ 1,690.00 ໂດລາສະຫະລັດ ຕາມລຳດັບ.

ຂໍ້ມູນສິດທິພິເສດທາງການຄ້າເບື້ອງເຂົ້າທີ່ນຳເອົາມາທຳການວິເຄາະໃນຄັ້ງນີ້ປະກອບມີຂໍ້ມູນສິດທິພິເສດທາງການຄ້າແບບທົ່ວໄປ, ແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ແລະ ສິດທິພິເສດທາງການຄ້າໃນຂອບອົງການການຄ້າໂລກ (WTO).

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 20, ແລະ ເອກະສານຊ້ອນທ້າຍທີ 14)

**ຮູບສະແດງ 21** ປະເທດນຳເຂົ້າໂດຍນຳໃຊ້ສິດທິພິເສດທາງການຄ້າ 2013-2017



## 3.2 ລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

ສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ 05 ປີ (2013-2017) ທີ່ຜ່ານມາເຫັນວ່າ ມີລາຍການສິນຄ້າທັງໝົດຈຳນວນ 570 ລາຍການ. ໃນປີ 2017 ເຫັນວ່າ ມີສິນຄ້ານຳເຂົ້າທັງໝົດ 338 ລາຍການ ລວມມູນຄ່າການນຳເຂົ້າທັງໝົດ 535,722,417.00 ໂດລາສະຫະລັດ, ຊຶ່ງສິນຄ້ານຳເຂົ້າຫຼັກແມ່ນ ຍານພາຫະນະ (ລະຫັດພາສີ 8703) ມູນຄ່າ 261,003,214.00 ໂດລາສະຫະລັດ, ຮອງລົງມາແມ່ນ ສິ້ນສ່ວນ ແລະ ສ່ວນປະກອບຂອງພາຫະນະ (ລະຫັດພາສີ 8714) ມູນຄ່າ 50,401,164.00 ໂດລາສະຫະລັດ, ແລະ ຍານພາຫະນະສຳລັບຂົນສົ່ງສິນຄ້າ (ລະຫັດພາສີ 8704) ມູນຄ່າ 38,882,431.00 ໂດລາສະຫະລັດ. ສຳລັບປີ 2016 ເຫັນວ່າ ມີສິນຄ້ານຳເຂົ້າທັງໝົດ 303 ລາຍການ ມູນຄ່າລວມຂອງການນຳເຂົ້າໃນປີ 2016 ນີ້ມີມູນຄ່າການນຳເຂົ້າສູງສຸດເມື່ອທຽບໃສ່ກັບປີອື່ນໆ 596,371,426.00 ໂດລາສະຫະລັດ, ຊຶ່ງສິນຄ້ານຳເຂົ້າຫຼັກແມ່ນ ຍານພາຫະນະ (ລະຫັດພາສີ 8703) ມູນຄ່າ 348,563,505.00 ໂດລາສະຫະລັດ, ຮອງລົງມາແມ່ນ ສິ້ນສ່ວນ ແລະ ສ່ວນປະກອບຂອງພາຫະນະ (ລະຫັດພາສີ 8714) ມູນຄ່າ 47,656,527.00 ໂດລາສະຫະລັດ, ແລະ ຍານພາຫະນະສຳລັບຂົນສົ່ງສິນຄ້າ (ລະຫັດພາສີ 8704) ມູນຄ່າ 39,649,985.00 ໂດລາສະຫະລັດ. ໃນປີ 2015 ເຫັນວ່າ ມີສິນຄ້ານຳເຂົ້າທັງໝົດ 292 ລາຍການ ລວມມູນຄ່າການນຳເຂົ້າທັງໝົດ 172,981,884.00 ໂດລາສະຫະລັດ, ຊຶ່ງສິນຄ້ານຳເຂົ້າຫຼັກແມ່ນ ລົດຈັກ (ລະຫັດພາສີ 8711) ມູນຄ່າ 54,228,424.00 ໂດລາສະຫະລັດ, ຮອງລົງມາແມ່ນ ສິ້ນສ່ວນ ແລະ ສ່ວນປະກອບຂອງພາຫະນະ (ລະຫັດພາສີ 8714) ມູນຄ່າ 9,642,150.00 ໂດລາສະຫະລັດ, ແລະ ຍານພາຫະນະສຳລັບຂົນສົ່ງສິນຄ້າ (ລະຫັດພາສີ 8704) ມູນຄ່າ 2,106,544.00 ໂດລາສະຫະລັດ. ໃນປີ 2014 ເຫັນວ່າ ມີລາຍການສິນຄ້ານຳເຂົ້າທັງໝົດ 246 ລາຍການ ລວມມູນຄ່າການນຳເຂົ້າທັງໝົດ 160,315,017.00 ໂດລາສະຫະລັດ, ຊຶ່ງສິນຄ້ານຳເຂົ້າຫຼັກແມ່ນ ລົດຈັກ (ລະຫັດພາ ສີ 8711) ມູນຄ່າ 58,083,259.00 ໂດລາສະຫະລັດ, ຮອງລົງມາແມ່ນ ສິ້ນສ່ວນ ແລະ ສ່ວນປະກອບຂອງພາຫະນະ (ລະຫັດພາສີ 8714) ມູນຄ່າ 9,395,959.00 ໂດລາສະຫະລັດ, ແລະ ນ້ຳມັນປິໂຕຣລ້ຽມ ແລະ ນ້ຳມັນດິບ (ລະຫັດພາສີ 2710) ມູນຄ່າ 9,355,874.00 ໂດລາສະຫະລັດ. ສຳລັບປີ 2013 ເຫັນວ່າ ມີສິນຄ້ານຳເຂົ້າຫຼາຍກວ່າໝູ່ຄື 417 ລາຍການ ລວມມູນຄ່າການນຳເຂົ້າທັງໝົດ 216,681,101.00 ໂດລາສະຫະລັດ, ຊຶ່ງສິນຄ້ານຳເຂົ້າຫຼັກແມ່ນ ລົດຈັກ (ລະຫັດພາສີ 8711) ມູນຄ່າ 53,565,469.00 ໂດລາສະຫະລັດ, ຮອງລົງມາແມ່ນຄຳຂາວ 25,821,468.00 ໂດລາສະຫະລັດ, ແລະ ນ້ຳມັນປິໂຕຣລ້ຽມ ແລະ ນ້ຳມັນດິບ (ລະຫັດພາສີ 2710) ມູນຄ່າ 18,846,937.00 ໂດລາສະຫະລັດ.

**ຮູບສະແດງ 22** ລາຍການສິນຄ້ານຳເຂົ້າພາຍໃຕ້ທີພີເສດທາງການຄ້າ 2013-2017



# 4. ເອກະສານຄັດຕິດ ແລະ ເອກະສານຊ້ອນທ້າຍ

### ເອກະສານຄັດຕິດທີ 01

## ສະຖິຕິການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ປີ 2013 ເຖິງ 2017

(ຫົວໜ່ວຍເປັນໂດລາສະຫະລັດ:USD)

| ລ/ດ | ລາຍການ | ມູນຄ່າ | | | | |
|---|---|---|---|---|---|---|
| | | 2013 | 2014 | 2015 | 2016 | 2017 |
| I | ການສົ່ງອອກ | | | | | |
| 1 | ການສົ່ງອອກທັງໝົດ | 3,756,976,356.00 | 3,277,148,952.00 | 3,681,514,936.00 | 4,236,226,334.00 | 4,887,883,755.00 |
| 2 | ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 1,023,694,522.28 | 1,143,694,992.14 | 1,172,538,600.98 | 1,131,021,926.63 | 1,390,664,591.66 |
| 3 | ອັດຕາສ່ວນ | 27.2% | 34.9% | 31.8% | 26.7% | 28.5% |
| II | ການນຳເຂົ້າ | | | | | |
| 1 | ການນຳເຂົ້າທັງໝົດ | 3,772,940,979 | 4,966,867,180 | 4,061,783,108 | 4,219,303,858 | 4,792,392,257 |
| 2 | ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 216,681,101.00 | 160,315,017.00 | 172,981,884.00 | 596,371,426.00 | 535,722,417 |
| 3 | ອັດຕາສ່ວນ | 5.7% | 3.2% | 4.3% | 14.1% | 11.2% |

### ເອກະສານຄັດຕິດທີ 02

## ປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2015, 2016, ແລະ 2017

ຫົວໜ່ວຍເປັນໂດລາສະຫະລັດ (USD)

| ລ/ດ | ລາຍຊື່ປະເທດ | ມູນຄ່າການສົ່ງອອກ | | |
|---|---|---|---|---|
| | | 2017 | 2016 | 2015 |
| 1 | ໄທ/THAILAND | 569,967,866.06 | 464,481,841.56 | 518,367,833.70 |
| 2 | ຫວຽດນາມ/VIET NAM | 270,548,296.38 | 204,296,479.38 | 184,024,878.21 |
| 3 | ຍີ່ປຸ່ນ/JAPAN | 108,207,307.52 | 50,482,555.94 | 46,773,324.98 |
| 4 | ເຢຍລະມັນ/GERMANY | 95,499,439.97 | 94,136,989.23 | 63,601,063.84 |
| 5 | ຈີນ/CHINA | 93,137,188.01 | 79,756,829.14 | 56,646,205.85 |
| 6 | ສະວີເດນ/SWEDEN | 60,668,343.98 | 30,839,022.31 | 24,346,427.43 |
| 7 | ອັງກິດ/UNITED KINGDOM | 43,605,625.85 | 47,054,842.85 | 43,062,076.52 |
| 8 | ປ໋ອກຕຸຍການ/PORTUGAL | 26,992,568.81 | 6,504,924.36 | 5,330,652.30 |
| 9 | ອີຕາລີ/ITALY | 18,680,308.62 | 17,315,454.91 | 25,231,402.23 |
| 10 | ກຳປູເຈຍ/CAMBODIA | 17,545,922.56 | 6,657,530.00 | 14,183,788.80 |
| 11 | ໂປໂລຍ/POLAND | 16,924,963.93 | 2,284,943.65 | 720,470.40 |
| 12 | ອິນເດຍ/INDIA | 12,642,927.23 | 48,929,529.28 | 94,243,586.31 |
| 13 | ແບນຊິກ/BELGIUM | 11,849,208.01 | 20,799,522.44 | 13,916,877.01 |

| | | | | |
|---|---|---|---|---|
| 14 | ຝຣັ່ງ/FRANCE | 9,959,627.46 | 10,667,251.89 | 10,704,036.38 |
| 15 | ໂຮນລັງ/NETHERLANDS | 7,824,970.62 | 16,313,372.18 | 35,507,842.23 |
| 16 | ມາເລເຊຍ/MALAYSIA | 5,135,102.61 | 5,251,458.11 | 3,988,878.49 |
| 17 | ຟິລິບປິນ/PHILIPPINES | 4,122,599.20 | 4,936,619.22 | 6,983,152.41 |
| 18 | ແອັກລັງ/IRELAND | 2,292,711.08 | 647,279.80 | 2,034,588.09 |
| 19 | ໂອຕຣິສ/AUSTRIA | 2,270,830.26 | 1,195,482.56 | 936,406.98 |
| 20 | ສ ເກົາຫຼີ/KOREA, REPUBLIC OF | 2,246,566.30 | 4,205,357.24 | 9,412,298.75 |
| 21 | ແອັສປາຍ/SPAIN | 2,165,695.84 | 1,925,710.45 | 1,835,199.52 |
| 22 | ຕວກກີ/TURKEY | 2,111,282.64 | - | 454,981.53 |
| 23 | ສ ອາເມລິກາ/UNITED STATES | 1,980,316.93 | 2,886,971.65 | 1,358,451.40 |
| 24 | ອົດສະຕາລີ/AUSTRALIA | 1,311,327.22 | 355,098.80 | 1,067,776.44 |
| 25 | ອິນໂດເນເຊຍ/INDONESIA | 1,180,643.22 | 990,648.00 | - |
| 26 | ເກຼັກ/GREECE | 560,382.00 | - | 44,160.00 |
| 27 | ເອັສໂຕີ/ESTONIA | 237,600.00 | 700,827.50 | - |
| 28 | ການາດາ/CANADA | 173,780.78 | 21,669.59 | 906,484.99 |
| 29 | ສ.ມຽນມາ/MYANMAR | 164,758.90 | 321,997.60 | 9,600.00 |
| 30 | ໂກຣອາເຊຍ/CROATIA | 162,600.00 | - | - |
| 31 | ລັດເຊຍ/RUSSIAN FEDERATION | 130,775.00 | 96,384.00 | - |
| 32 | ສະໂລເວເຍ/SLOVENIA | 116,224.32 | 37,047.22 | 57,754.60 |
| 33 | ສິງກະໂປ/SINGAPORE | 70,752.40 | 9,456.00 | 653,801.51 |
| 34 | ນໍອກເວ/NORWAY | 56,215.20 | 40,188.00 | - |
| 35 | ສະວິດເຊີແລນ/SWITZERLAND | 44,742.94 | 34,546.27 | 149,963.67 |
| 36 | ເດນມາກ/DENMARK | 39,767.50 | 3,681,502.36 | 5,566,613.49 |
| 37 | ນິວຊີແລນ/NEW ZEALAND | 35,352.30 | 36,620.10 | 134,214.29 |
| 38 | ເຊັກ/CZECH REPUBLIC | - | 218,332.73 | 207,308.63 |
| 39 | ຮົງກົງ/HONG KONG | - | 692,315.20 | - |
| 40 | ຮົງກາລີ/HUNGARY | - | 234,360.00 | - |
| 41 | ລັດເວຍ/LATVIA | - | 129,467.40 | - |
| 42 | ໂຣມາເນຍ/ROMANIA | - | 2,533,200.00 | - |
| 43 | ໄຕ້ຫວັນ/TAIWAN, OF CHINA | - | 126,875.00 | - |
| 44 | ຟິນແລນ/FINLAND | - | - | 76,500.00 |
| ລວມ | | 1,390,664,591.66 | 1,131,830,503.93 | 1,172,538,600.98 |

ເອກະສານຄັດຕິດທີ 03

## ສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນເຄື່ອງນຸ່ງຫົ່ມ

ຫົວໜ່ວຍເປັນໂດລາສະຫະລັດ (USD)

| ລ/ດ | ລະຫັດພາສີ (HS Code) | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2017 | 2016 |
| 1 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອ ເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ງງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນ້ຳ) | 94,964,484.84 | 3,112,956.57 |
| 2 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງທີ່ມີອ້ງງ ແລະ ສາຍພາດບ່າ... | 35,038,779.86 | 98,824,345.40 |
